**Official inauguration of the United Nations House and Launch of the MDG Progress Report**

**Vientiane, 11 April 2009**

---

**ຄຳປາໄສ ຂອງ**
**ພະນະທ່ານ ດຣ. ທອງລຸນ ສີສຸລິດ,**
**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ**
**ກ່າວໃນພິທີເປີດຫ້ອງການສຳນັກງານອົງການສະຫະປະຊາຊາດ ແລະ**
**ການເປີດບັ້ນເຜີຍແຜ່ບົດລາຍງານແຫ່ງຊາດ ກ່ຽວກັບການການຈັດຕັ້ງປະຕິບັດ**
**ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ**
**ທີ່ ນະຄອນຫລວງວຽງຈັນ, ວັນທີ່ 11 ເມສາ 2009**

-----------------------------------

*ພະນະທ່ານ ບັນ ກີມູນ, ເລຂາທິການໃຫຍ່ ອົງການສະຫະປະຊາຊາດ*
*ທ່ານ ຜູ້ປະສານງານອົງການ ສປຊ ປະຈຳ ສປປລາວ,*
*ບັນດາທ່ານ ລັດຖະມົນຕີວ່າການ ແລະ ຊ່ວຍວ່າການ,*
*ບັນດາທ່ານ ທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປລາວ,*
*ບັນດາແຂກຜູ້ມີກຽດ ທັງພາຍໃນ ແລະ ຕ່າງປະເທດ,*
*ທ່ານ ຍິງ ທ່ານຊາຍ ທັງຫລາຍ,*

ມື້ນີ້ ຂ້າພະເຈົ້າຮູ້ສຶກປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ຮ່ວມກັບອົງການສະຫະປະຊາຊາດ ຈັດພິທີເປີດ ສຳນັກງານອົງການສະຫະປະຊາຊາດ ຫລັງໃໝ່ ປະຈຳ ສປປລາວ ທີ່ ນະຄອນ ຫລວງວຽງຈັນ. ພິທີດັ່ງກ່າວນີ້ ຍິ່ງມີຄວາມໝາຍສູງ ແລະ ມີຄວາມສະຫງ່າລາສີ ດ້ວຍການເຂົ້າຮ່ວມ ຂອງພະນະທ່ານ ບັນ ກີມູນ ເລຂາທິການໃຫຍ່ອົງການສະຫະປະຊາຊາດ. ການເປີດສຳນັກງານນີ້, ໄດ້ມີຂຶ້ນໃນທ່າມກາງບັນຍາກາດ ທີ່ ລັດຖະບານ ແລະ ປະຊາຊົນລາວ ກຳລັງຂຸ້ນຂ້ຽວຈັດຕັ້ງ ປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແນໃສ່ ເພື່ອບັນລຸເປົ້າໝາຍການພັດທະນາ ແຫ່ງຊາດຂອງຕົນ ລວມທັງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ. ພ້ອມດຽວກັນນີ້, ການຈັດພິທີໃນມື້ນີ້ ກໍເປັນນິມິດໝາຍອັນສຳຄັນຍິ່ງ ເພາະເປັນໄລຍະທີ່ ປະຊາຊົນລາວບັນດາ ເຜົ່າທົ່ວປະເທດ ກຳລັງກ່າວເຂົ້າສູ່ການສະເຫລີມສະຫລອງບຸນປີໃໝ່ລາວ ເຊິ່ງ ເປັນປະເພນີ ອັນດີງາມ ທີ່ທ່າຍຖອດກັນມາຕັ້ງແຕ່ບູຮານນະການ.

ບັນດາທ່ານ ທີ່ມີກຽດທັງຫລາຍ,

ສປປລາວ ກັບ ອົງການສະຫະປະຊາຊາດ ມີການຮ່ວມມືອັນຍາວນານ. ນັບຕັ້ງແຕ່ ລາວ ເຂົ້າເປັນສະມາຊິກ ສປຊ ໃນປີ 1955 ເປັນຕົ້ນມາ, ອົງການ ສປຊ ກໍ່ໄດ້ມີບົດບາດອັນສໍາຄັນ ປະກອບສ່ວນເຂົ້າໃນການສ້າງສາພັດທະນາ ຢູ່ ລາວ. ໃນໄລຍະຕໍ່ສູ້ກູ້ຊາດເພື່ອເອກະລາດ ແລະ ອະທິປະໄຕ ຂອງລາວ, ອົງການ ສປຊ ໄດ້ພະຍາຍາມຊ່ວຍໄກ່ເກ່ຍ ແນໃສ່ສ້າງຄວາມ ປອງດອງຊາດ ແລະ ສ້າງສັນຕິພາບ ຢູ່ ລາວ. ພາຍຫລັງ ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 1975 ເປັນຕົ້ນມາ, ບົດບາດ ຂອງ ອົງການສະຫະປະຊາຊາດ ຢູ່ ສປປລາວ ໄດ້ເພີ່ມທະວີຂຶ້ນ ໂດຍສະເພາະ ໃນຂົງເຂດວຽກງານການພັດທະນາ ເສດຖະກິດ-ສັງຄົມ ແລະ ຫລຸດຜ່ອນຄວາມທຸກຍາກ. ຕະຫລອດໄລຍະ ເກືອບ 6 ທົດສະຫວັດ ທີ່ຜ່ານມາ, ການຮ່ວມມື ລະຫວ່າງ ສປປລາວ ກັບ ອົງການສະຫະປະຊາຊາດ ໄດ້ຂະຫຍາຍຕົວ ອອກເປັນກ້າວໆ, ເຊິ່ງໄດ້ກວມເອົາຫລາຍຂົງເຂດວຽກງານ ທີ່ເປັນບຸລິມະສິດ ຂອງ ລັດຖະບານ ສປປລາວ ເຊັ່ນ: ຂະແໜງການສຶກສາ, ສາທາລະນະສຸກ ແລະ ກະສິກໍາ, ການປັບ ປຸງຊີດຄວາມສາມາດ ແຫ່ງຊາດ, ການກໍ່ສ້າງພື້ນຖານໂຄງລ່າງ, ການພັດທະນາຊົນນະບົດແບບ ຮອບດ້ານ, ໃນນັ້ນລວມທັງການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຊັບພະຍາກອນມະນຸດ, ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທໍາມະຊາດ. ການຊ່ວຍເຫລືອ ຂອງ ສປຊ ໄດ້ເພີ້ມຂຶ້ນ ໃນແຕ່ລະປີ ແລະ ປະຈຸບັນໂດຍສະເລ່ຍ ຫລາຍກວ່າ 50 ລ້ານໂດລາ ຕໍ່ປີ. ການຮ່ວມມື ແລະ ຊ່ວຍເຫລືອ ຂອງ ອົງການເຄືອຄ່າຍສະຫະປະຊາຊາດ ຕໍ່ ສປປລາວ, ເຊິ່ງແມ່ນການຊ່ວຍ ເຫລືອລ້າ ໂດຍບໍ່ມີເງື່ອນໄຂໃດໆ ໄດ້ເປັນການປະກອບ ສ່ວນອັນສໍາຄັນ ເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ. ໃນໂອກາດນີ້, ຂ້າພະເຈົ້າ ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈຢ່າງຈິງໃຈ ມາຍັງອົງການເຄືອຄ່າຍ ສປຊ ທີ່ໄດ້ໃຫ້ການຮ່ວມມື ແລະ ຊ່ວຍເຫລືອຢ່າງມີໝາກຜົນແກ່ ສປປລາວ ດັ່ງກ່າວນັ້ນ.

ເພື່ອເປັນສັນຍາລັກແຫ່ງ ການປະກອບສ່ວນຊ່ວຍເຫລືອ ຂອງ ອົງການ ສປຊ ຕໍ່ ສປປລາວ ກໍ່ຄືເພື່ອເສີມຂະຫຍາຍການຮ່ວມມື ໃນຕໍ່ໜ້າ, ລັດຖະບານລາວ ຈຶ່ງໄດ້ສ້າງຫ້ອງການສໍານັກງານ ຖາວອນ ໃຫ້ແກ່ອົງການສະຫະປະຊາຊາດ ເຊິ່ງການກໍ່ສ້າງໄດ້ເລີ້ມຕົ້ນ ໃນປີ 2005 ແລະ ສໍາເລັດລົງ ໃນປີ 2007. ການຕັດສິນໃຈ ໃນການສ້າງ ຫ້ອງການຖາວອນໃຫ້ ອົງການ ສປຊ ນີ້ ເປັນສິ່ງຢືນຢັນຢ່າງຈະແຈ້ງເຖິງ ເຈດຕະນາລົມດ້ານການເມືອງ ຂອງລັດຖະບານລາວ ໃນການ ຈະຮັດແໜ້ນການຮ່ວມມື ກັບອົງການສະຫະປະຊາຊາດ. ພ້ອມກັນນັ້ນ, ກໍ່ເປັນການຊີ້ ໃຫ້ເຫັນ ເຖິງການໃຫ້ຄວາມສໍາຄັນ ຂອງລັດຖະບານ ສປປລາວ ແກ່ບົດບາດຂອງອົງການເຄືອຄ່າຍ ສປຊ ໃນຂະບວນການພັດທະນາ ເສດຖະກິດ-ສັງຄົມ ຂອງ ສປປລາວ. ພິທີເປີດຫ້ອງການ ຂອງ ສປຊ ໃນມື້ນີ້ ບໍ່ພຽງແຕ່ເປັນຈຸດເລີ້ມຕົ້ນ ຂອງການການຈັດຕັ້ງປະຕິບັດ ນະໂຍບາຍການເປັນໜຶ່ງດຽວ ຂອງອົງການ ສປຊ (One UN) ເທົ່ານັ້ນ, ແຕ່ ມັນຍັງເປັນຂີດໝາຍປະຫວັດສາດແຫ່ງການຮ່ວມມື ລະຫວ່າງ ສປປລາວ ກັບອົງການສະຫະປະຊາຊາດ. ນອກຈາກນີ້, ການມີໜ້າ ຂອງພະນະທ່ານ ເລຂາທິການໃຫຍ່ ສປຊ ບັນ ກີມູນ ໃນພິທີດັ່ງກ່າວນີ້ ຍິ່ງເປັນການຢືນຢັນເຖິງຄວາມໝາຍໝັ້ນ ຂອງອົງການ ສປຊ

ທີ່ຈະສືບຕໍ່ເພີ້ມທະວີການຮ່ວມມື ແລະ ການຊ່ວຍເຫລືອໃຫ້ແກ່ລັດຖະບານ ແລະ ປະຊາຊົນລາວ ຕໍ່ໆໄປ.

ບັນດາ ທ່ານທີ່ມີກຽດທັງຫລາຍ,

ປະຈຸບັນນີ້ ພວກເຮົາ ມາຮອດເຄິ່ງທາງ ຂອງການຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ ເຊິ່ງ ຫລາຍປະເທດໃນໂລກ ກໍ່ໄດ້ມີການທົບທວນຄືນຄວາມຄືບໜ້າ ໃນການບັນລຸເປົ້າໝາຍດັ່ງກ່າວ. ລັດຖະບານ ສປປລາວ ໄດ້ເອົາໃຈໃສ່ ຕໍ່ການຈັດຕັ້ງ ປະຕິບັດ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ເຊິ່ງ ສະແດງອອກໃນການເອົາ ເປົ້າໝາຍສະຫັດ ສະຫວັດດ້ານການພັດທະນາ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງ ສປປລາວ. ມາຮອດປະຈຸບັນ ລັດຖະບານລາວ ໂດຍຮ່ວມມື ກັບ ອົງການສະຫະປະຊາຊາດ ໄດ້ສຳເລັດ ການເຮັດບົດລາຍງານ ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ຢູ່ ສປປລາວ. ບົດລາຍງານສະບັບນີ້ ເປັນບົດລາຍງານແຫ່ງຊາດ ສະບັບທີ່ສອງ ເຊິ່ງໄດ້ທົບທວນ ຄືນຄວາມຄືບໜ້າ ຂອງການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ, ຊີ້ໃຫ້ເຫັນ ແລະ ວິໃຈບັນຫາຄວາມຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດ ເປົ້າໝາຍແຕ່ລະອັນ. ພ້ອມດຽວກັນນີ້ ບົດລາຍງານດັ່ງກ່າວ ຍັງໄດ້ ໃຫ້ຄຳແນະນຳ ແລະ ສະເໜີມາດຕະການ ໃນການຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ ທີ່ ລັດຖະບານ ແລະ ປະຊາຊົນລາວ ກຳລັງປະເຊີນ ແນໃສ່ບັນລຸເປົ້າໝາຍ ໃຫ້ໄດ້ ໃນປີ 2015. ສະນັ້ນ, ໃນໂອກາດນີ້ ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະ ມີຄວາມຍິນດີເປັນຢ່າງຍິ່ງ ທີ່ຈະໄດ້ປະກາດເປີດການ ເຜີຍແຜ່ບົດລາຍງານ ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ຮ່ວມກັບ ພະນະທ່ານ ເລຂາທິການ ຫຍ່ ສປຊ ໃນຄັ້ງນີ້.

ບັນດາແຂກທີ່ມີກຽດ,

ໃນໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ມາຍັງ ພະນະ ທ່ານ ບັນ ກີມູນ, ເລຂາທິການໃຫຍ່ ສປຊ ທີ່ໄດ້ເຂົ້າຮ່ວມ ໃນພິທີດັ່ງກ່າວ. ພ້ອມດຽວກັນນີ້ ກໍ່ສະແດງຄວາມ ຂອບໃຈ ມາຍັງບັນດາແຂກທຸກທ່ານ ທີ່ສະລະເວລາມາຮ່ວມໃນພິທີດັ່ງກ່າວ ໃນຄັ້ງນີ້ ແລະ ໃນໂອກາດປີໃໝ່ລາວທີ່ຈະມາເຖິງນີ້, ຂ້າພະເຈົ້າຂໍອ່ວຍພອນ ໃຫ້ແກ່ບັນທ່ານທຸກຄົນ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດ ໃນໜ້າທີ່ການງານອັນມີກຽດ ຂອງທ່ານ

ຂອບໃຈ.